ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******

ທະນາຄານແຫ່ງ ສ.ປ.ປ.ລາວ

ເລກທີ: 474 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 0 2 JUL 2008

# ຂໍ້ຕົກລົງ

## ກ່ຽວກັບການກຳນົດອັດຕາດອກເບ້ຍຊື້-ຂາຍຂາດຕົວ ແລະ ອັດຕາດອກເບ້ຍຊື້-ຂາຍຝາກພັນທະບັດ

- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14/10/1999;
- ອີງຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ ເລກທີ 03/ສພຊ, ລົງວັນທີ 26/12/2006;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມນະໂຍບາຍເງິນຕາ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

**ມາດຕາ 1. ຈຸດປະສົງ**

ເພື່ອສ້າງພື້ນຖານການພັດທະນາຕະຫຼາດເງິນ ແລະຕະຫຼາດທຶນ ແລະຊຸກຍູ້ທະນາຄານທຸລະກິດນຳໃຊ້ແຫຼ່ງທຶນຕົນເອງຢ່າງມີປະສິດທິຜົນ ພ້ອມກັນນັ້ນ ກໍເພື່ອໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດບົດບາດຜູ້ໃຫ້ກູ້ແຫຼ່ງສຸດທ້າຍຢ່າງແທ້ຈິງ.

**ມາດຕາ 2. ຄຳນິຍາມ**

1. "ອັດຕາດອກເບ້ຍຊື້-ຂາຍຂາດຕົວ" ໝາຍເຖິງ ອັດຕາທີ່ຖືກນຳໃຊ້ ໃນກໍລະນີທີ່ຜູ້ຖືຄອງພັນທະບັດຂາດສະພາບຄ່ອງ ແລະຕ້ອງການຂາຍຂາດພັນທະບັດໃຫ້ຜູ້ອື່ນຖືປ່ຽນແທນ.
2. "ອັດຕາດອກເບ້ຍຊື້-ຂາຍຝາກ" ໝາຍເຖິງ ອັດຕາທີ່ຖືກນຳໃຊ້ໃນກໍລະນີທີ່ຜູ້ຖືຄອງພັນທະບັດຂາດສະພາບຄ່ອງຊົ່ວຄາວ ແລະຜູ້ຖືພັນທະບັດ ຈະຊື້ຄືນເມື່ອຄົບອາຍຸສັນຍາ.
3. "ອັດຕາດອກເບ້ຍມາດຕະຖານ" ໝາຍເຖິງ ອັດຕາດອກເບ້ຍໄລຍະສັ້ນອາຍຸຕ່ຳກວ່າ 7 ມື້ ເປັນເງິນກີບ ທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ.



ທະນາຄານແຫ່ງ ສ.ປ.ປ.ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19, SWIFT CODE : LPDR LA LA, Website : www. bol.gov.la
ໂທລະພິມ: 4304 BNL.VTE.LS ໂທລະສານ: (856)-21-213108 ໂທລະສັບ: 213109-213110 E-mail: Bol@bol.gov.la

**ມາດຕາ 3. ການກຳນົດອັດຕາດອກເບ້ຍຊື້-ຂາຍຂາດຕົວ**

ອັດຕາດອກເບ້ຍຊື້-ຂາຍຂາດຕົວ ແມ່ນຢູ່ໃນລະດັບຕ່ຳກວ່າອັດຕາດອກເບ້ຍມາດຕະຖານປະມານ 15%.

**ອັດຕາດອກເບ້ຍຊື້-ຂາຍຂາດຕົວ = ອັດຕາດອກເບ້ຍມາດຕະຖານ x (1-15%)**

**ມາດຕາ 4. ການກຳນົດອັດຕາດອກເບ້ຍຊື້-ຂາຍຝາກ**

ອັດຕາດອກເບ້ຍຊື້-ຂາຍຝາກ ແມ່ນຢູ່ໃນລະດັບຕ່ຳກວ່າອັດຕາດອກເບ້ຍມາດຕະຖານປະມານ 30%.

**ອັດຕາດອກເບ້ຍຊື້-ຂາຍຝາກ = ອັດຕາດອກເບ້ຍມາດຕະຖານ x (1-30%)**

**ມາດຕາ 5. ການຈັດຕັ້ງປະຕິບັດ**

ໃຫ້ກົມບໍລິການທະນາຄານ ແລະບັນດາທະນາຄານທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ເພື່ອເປັນຄູ່ມືໃນການຈັດຕັ້ງປະຕິບັດ. ໃຫ້ກົມບໍລິການທະນາຄານ ແລະພາກສ່ວນກ່ຽວຂ້ອງຕິດຕາມກວດກາຢ່າງເຂັ້ມງວດ, ລາຍງານສະພາບການເຄື່ອນໄຫວຂອງອັດຕາດອກເບ້ຍຊື້-ຂາຍຂາດໂຕ ແລະອັດຕາດອກເບ້ຍຊື້-ຂາຍຝາກໃຫ້ຄະນະຜູ້ວ່າການຢ່າງປົກກະຕິ.

**ມາດຕາ 6. ຜົນສັກສິດ**

ຂໍ້ຕົກລົງ, ບົດແນະນຳ ແລະລະບຽບຫຼັກການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

ສຸເພັດ ຄຳພູນວົງ

ບ່ອນສົ່ງ: - ບັນດາກົມ ແລະທຽບເທົ່າກົມພາຍໃນ ທຫລ 1 ສະບັບ
- ທະນາຄານທຸລະກິດ 1 ສະບັບ